ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

..................

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເລກທີ 235/ພຊສຂ

ບໍ່ແກ້ວ, ວັນທີ 27.2.2014

# ໃບຢັ້ງຢືນ

- **ອີງຕາມ** : ກົດໝາຍ ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບປັບປຸງ ເລກທີ 29/ສພຊ ນະຄອນຫຼວງວຽງຈັນ, ວັນທີ 18 ທັນວາ 2012
- **ອີງຕາມ** : ດຳລັດ ຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍ ການປະເມີນ ຜົນກະທົບຕໍ່ສິ່ງແວດລ້ອມ ສະບັບເລກທີ 112/ນຍ ລົງວັນທີ 16/2/2010.
- **ອີງໃຕາມ** : ໜັງສືສະເໜີ ຂອງພະແນກກະສິກຳ - ປ່າໄມ້ແຂວງ ໜ່ວຍງານຄຸ້ມຄອງໂຄງການ ພຄສ ສະບັບ ເລກທີ 110/ພຊຄ. ລົງວັນທີ 25 ກຸມພາ 2014.

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງຕົກລົງ :

1. ເຫັນດີ ຮັບຮອງເອົາບົດລາຍງານ ການສຶກສາສິ່ງແວດລ້ອມເບື້ອງຕົ້ນ ສະບັບເດືອນ ກຸມພາ ປີ 2014 ຂອງ ໂຄງການຍ່ອຍ ນ້ຳຫາດກຳຊ້າຍ ປີ 02 ເມືອງ ຜາອຸດົມ ແຂວງບໍ່ແກ້ວ.
2. ໃຫ້ຜູ້ພັດທະນາໂຄງການ ປະຕິບັດ ຕາມເງື່ອນໄຂດັ່ງນີ້ :

ກ. ຮັບຜິດຊອບໂດຍກົງ ຕໍ່ການສຶກສາ ແລະ ການເກັບກຳຂໍ້ມູນ ທີໄດ້ກຳນົດໄວ້ ໃນບົດລາຍງານ ການສຶກສາສິ່ງແວດລ້ອມເບື້ອງຕົ້ນ ໃນກໍລະນີເກີດມີຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ເກີດຂື້ນທີ່ບໍ່ໄດ້ສຶກສາໄວ້ໃນບົດລາຍງານດັ່ງກ່າວ ຜູ້ພັດທະນາໂຄງການຕ້ອງໄດ້ຮັບຜິດຊອບເພີ່ມເຕີມ ໃນການກຳນົດມາດຕະການຫຼຸດຜ່ອນ ແລະ ແກ້ໄຂບັນຫາເຫຼົ່ານັ້ນ ພ້ອມທັງຮັບປະກັນໃຫ້ມີງົບປະມານພຽງພໍ ໃນການລົງກວດກາສິ່ງແວດລ້ອມ ຢູ່ພາກສະໜາມ.

ຂ. ໃຫ້ເອົາໃຈໃສ່ ໃນການຈັດຕັ້ງປະຕິບັດ ມາດຕະການປ້ອງກັນ ແລະ ຫຼຸດຜ່ອນ ຜົນກະທົບຕໍ່ສິ່ງແວດລ້ອມເປັນຕົ້ນແມ່ນການກຳຈັດສິ່ງເສດເຫຼືອ,ບັນຫາການເຊາະເຈື່ອນຂອງໜ້າດິນ,ຄຸນນະພາບນ້ຳ, ຄາບນ້ຳມັນເຄື່ອງແລະ ອື່ນ ໆ ຕ້ອງເຮັດໃຫ້ຖືກຕາມເຕັກນິກ ໃນການກຳຈັດ ໃນຂອດເຂດທີກຳນົດໄວ້ ແລະ ໃຫ້ມີຜົນກະທົບໜ້ອຍທີສຸດຕໍ່ສັງຄົມ.

ຄ.ໃນໄລຍະກໍ່ສ້າງ ແລະ ພາຍຫຼັງ ກໍ່ສ້າງສຳເລັດເຈົ້າຂອງໂຄງການຕ້ອງໄດ້ປົວແປງ ແລະ ຟື້ນຟູ ສະພາບສິ່ງແວດລ້ອມຕ່າງໆ ທີຖືຜົນກະທົບ ຈາກການກໍ່ສ້າງ ໃຫ້ກັບຄືນສູ່ ສະພາບທີນຳໃຊ້ໄດ້

ງ. ຜູ້ພັດທະນາໂຄງການ ຕ້ອງເຮັດບົດສະຫຼຸບ ລາຍງານປະຈຳ 6 ເດືອນ, ປະຈຳປີ ກ່ຽວກັບການຈັດຕັ້ງປະຕິບັດ ແລະ ມາດຕະການຫຼຸດຜ່ອນ ແລະ ແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການ ສົ່ງໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງການທີກ່ຽວຂ້ອງຊາບ.

ໝາຍເຫດ :

ໃບຢັ້ງຢືນສະບັບນີ້ກຳນົດນຳໃຊ້ໄດ້ 01 ປີ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

ສົມພອນ ວັນນະສີ